ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງເລຂາ ຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ
ຄະນະຈັດຕັ້ງສູນກາງພັກ

ເລກທີ..216.../ກຈສພ

ນະຄອນຫຼວງວຽງຈັນ, ວັນທີ.15.. ມິຖຸນາ 2025

# ແຈ້ງການ

ເຖິງ: ສະຫາຍ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ.

ເລື່ອງ: ການຮັບຮອງເອົາກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງຄະນະໂຄສະນາອົບຮົມສູນກາງພັກ.

- ອີງຕາມ ມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ.
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ສະ ບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025.
- ອີງຕາມ ການສະເໜີຂອງຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ.
- ອີງຕາມ ການຕົກລົງເຫັນດີໃນກອງປະຊຸມຄະນະເລຂາທິການສູນກາງພັກ ຄັ້ງວັນທີ 11 ມິຖຸນາ 2025.

ຫົວໜ້າກອງເລຂາ ຄະນະປັບປຸງກົງຈັກການຈັດຕັ້ງ ( ຫົວໜ້າຄະນະຈັດຕັ້ງສູນກາງພັກ ) ຈຶ່ງແຈ້ງມາຍັງ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ຊາບວ່າ: ກອງປະຊຸມຄະນະເລຂາທິການສູນກາງພັກ ໄດ້ຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງຂັ້ນກົມ ແລະ ບຸກຄະລາກອນ ດັ່ງນີ້:

**I. ກົງຈັກການຈັດຕັ້ງ ມີຄື:**

ຄະນະໂຄສະນາອົບຮົມສູນກາງພັກ ( ໃໝ່ ) ປະກອບມີ 14 ກົມ ແລະ ທຽບເທົ່າ ຄື:

1) ຫ້ອງການ
2) ກົມຈັດຕັ້ງ ແລະ ພະນັກງານ
3) ກົມກວດກາ
4) ກົມໂຄສະນາ
5) ກົມອົບຮົມ
6) ກົມຂໍ້ມູນຂ່າວສານ
7) ວາລະສານອາລຸນໃໝ່
8) ໜັງສືພິມປະຊາຊົນ
9) ຫ້ອງການສະພາທິດສະດີສູນກາງພັກ
10)ກົມສື່ມວນຊົນ
11) ສໍານັກຂ່າວສານປະເທດລາວ
12) ໂທລະພາບແຫ່ງຊາດ
13) ວິທະຍຸກະຈາຍສຽງແຫ່ງຊາດ
14) ໜັງສືພິມພາສາຕ່າງປະເທດ



สแกนด้วย CamScanner

II. ບຸກຄະລາກອນ ຫົວໜ້າກົມ ແລະ ທຽບເທົ່າ ປະກອບມີ 13 ສະຫາຍ, ຍິງ 04 ສະຫາຍ ຄື:

1) ສະຫາຍ ບຸນເພັງ ຈັນທະວົງສາ — ຫົວໜ້າຫ້ອງການ
2) ສະຫາຍ ນາງ ແດງມະລີ ອິນທະມຸນດີ — ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ
3) ສະຫາຍ ສະຫວ່າງ ຕາລາແສນ — ຫົວໜ້າກົມກວດກາ
4) ສະຫາຍ ອານຸສັກ ອິນທະວົງ — ຫົວໜ້າກົມໂຄສະນາ
5) ສະຫາຍ ຄຳທອງ ທຳມະເທວາ — ຫົວໜ້າກົມອົບຮົມ
6) ສະຫາຍ ວັນດາລາ ອິກາບຸດ — ຫົວໜ້າກົມຂໍ້ມູນຂ່າວສານ
7) ສະຫາຍ ວັນລາດີ ຄຳອານວົງສາ — ບັນນາທິການໃຫຍ່ ວາລະສານອາລຸນໃໝ່
8) ສະຫາຍ ນາງ ພອນທິບ ສີຈະເລີນ — ຫົວໜ້າຫ້ອງການ ສະພາທິດສະດີສູນກາງພັກ
9) ສະຫາຍ ສົມສະຫວາດ ພັງສາ — ຫົວໜ້າກົມສື່ມວນຊົນ
10) ສະຫາຍ ບົວໄລ ພານຸວົງ — ຜູ້ອຳນວຍການໃຫຍ່ ວິທະຍຸກະຈາຍສຽງແຫ່ງຊາດ
11) ສະຫາຍ ນາງ ສົມມະນີ ແກ້ວແກນ — ຜູ້ອຳນວຍການໃຫຍ່ ໂທລະທັດແຫ່ງຊາດ
12) ສະຫາຍ ວັນນະສິນ ສົມມະວົງ — ບັນນາທິການໃຫຍ່ ສຳນັກຂ່າວສານປະເທດລາວ
13) ສະຫາຍ ນາງ ພອນສະຫວັນ ທຳແກ້ວ — ບັນນາທິການໃຫຍ່ ໜັງສືພິມພາສາຕ່າງປະເທດ

**III. ບັນຫາທີ່ຄວນເອົາໃຈໃສ່.**

1/ ມອບໃຫ້ຄະນະນຳ ຄະນະໂຄສະນາອົບຮົມສູນກາງພັກ ຮີບຮ້ອນສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດການເຄື່ອນໄຫວຂອງຄະນະໂຄສະນາອົບຮົມສູນກາງພັກ, ບັນດາກົມ ແລະ ທຽບເທົ່າທີ່ຂຶ້ນກັບຄະນະໂຄສະນາອົບຮົມສູນກາງພັກ ໃຫ້ສຳເລັດ.

2/ ສືບຕໍ່ຄົ້ນຄວ້າສັບຊ້ອນພະນັກງານທີ່ມີມາດຕະຖານ, ເງື່ອນໄຂ ຂັ້ນຮອງຫົວໜ້າກົມ, ຂັ້ນພະແນກ, ວິຊາການໃຫ້ກະທັດຮັດ ແລະ ຮັບປະກັນຄຸນນະພາບ.

3/ ສືບຕໍ່ຄົ້ນຄວ້າກົງຈັກຂັ້ນພະແນກໃຫ້ມີຈຳນວນກະທັດຮັດ ແຕ່ຮັບປະກັນການປະຕິບັດໜ້າທີ່ໃຫ້ມີຜົນສຳເລັດ.

4/ ສືບຕໍ່ຄົ້ນຄວ້າເປົ້າໝາຍທີ່ມີເງື່ອນໄຂອອກພັກການ-ຮັບອຸດໜູນບຳນານ ຕາມນິຕິກຳທີ່ກຳນົດໄວ້.

5/ ສືບຕໍ່ສົມທົບກັບກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຄົ້ນຄວ້າກ່ຽວກັບການ ໂອນວຽກສື່ມວນຊົນ ( ວຽກຖະແຫຼງຂ່າວ ) ຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງ-ແຂວງ ໄປຂຶ້ນກັບ ຄະນະໂຄສະນາອົບຮົມ ນະຄອນຫຼວງ-ແຂວງ; ໂອນວຽກສື່ມວນຊົນ ( ວຽກຖະແຫຼງຂ່າວ ) ຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນ-ເມືອງ ໄປຂຶ້ນກັບ ຄະນະໂຄສະນາອົບຮົມ ນະຄອນ-ເມືອງ ພ້ອມທັງລາຍງານມາຍັງ ຄະນະປັບປຸງກົງຈັກການຈັດຕັ້ງ ( ຫົວໜ້າຄະນະຈັດຕັ້ງສູນກາງພັກ ) ຮັບຊາບກ່ອນການດຳເນີນການປັບປຸງກົງຈັກການຈັດຕັ້ງຢູ່ທ້ອງຖິ່ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ເພື່ອຮັບຊາບ ແລະ ນຳພາຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າກອງເລຂາ
ຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ
ຫົວໜ້າຄະນະຈັດຕັ້ງສູນກາງພັກ



สแกนด้วย CamScanner